ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1135....../ຫອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 06 ພຶດສະພາ 2014

# <u>ແຈ້ງການເພີ້ມເຕີມ</u>

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.

ເລື່ອງ: ການມອບສິດໃຫ້ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າພິຈາລະນາອະນຸຍາດສົ່ງອອກໄມ້ປູກ (ໄມ້ສັກ, ໄມ້ຢາງພາລາ, ໄມ້ເກດສະໜາ, ໄມ້ວິກ, ໄມ້ກະຖິນນາລົງ ແລະ ໄມ້ກະຖິນເທພາ)

- ອີງຕາມ ຄຳສັ່ງຂອງ ນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/09/2008.
- ອີງຕາມ ຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ ສະບັບເລກທີ 41/ນຍ, ລົງວັນທີ 26/03/2014.
- ອີງຕາມ ແຈ້ງການ ສະບັບເລກທີ 1791/ອຄ.ກຂອ, ລົງວັນທີ 15/09/2011.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ດ້ວຍການຫຼຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນ ໃນການສົ່ງອອກໄມ້ປູກ ແລະ ປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 41/ນຍ, ລົງວັນທີ 26/03/2014 ວ່າດ້ວຍການມອບສິດໃຫ້ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າພິຈາລະນາອະນຸຍາດ ສົ່ງອອກໄມ້ປູກເຊັ່ນ: ໄມ້ສັກ, ໄມ້ຢາງພາລາ, ໄມ້ເກດສະໜາ, ໄມ້ວິກ, ໄມ້ກະຖິນນາລົງ ແລະ ໄມ້ກະຖິນເທພາ (ຄັດຕິດຂໍ້ຕົກລົງມາພ້ອມນີ້).

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກແຈ້ງການເພີ້ມເຕີມສະບັບນີ້ ເພື່ອເພີ້ມເຕີມລາຍການໄມ້ເຊັ່ນ: ໄມ້ສັກ, ໄມ້ຢາງພາລາ, ໄມ້ເກດສະໜາ ເຂົ້າໃນຂໍ້ 1.2 ຂອງ ແຈ້ງການ ເລກທີ 1791/ອຄ.ກຂອ, ລົງວັນທີ 15/09/2011, ສ່ວນນອກເໜືອຈາກປະເພດໄມ້ທີ່ກ່າວມາຂ້າງເທິງ ແມ່ນ ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ຍັງເປັນຜູ້ຄຸ້ມຄອງອອກອະນຸຍາດຄືເກົ່າ. ໌

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ລ. ຫົວໜ້າຫ້ອງການ,

ບຸນທອງ ໂສພາວັນດີ

ນຳສົ່ງ:
- ຄະນະນຳກະຊວງ ອຄ
- ກະຊວງການເງິນ, ກົມພາສີ "ເພື່ອແຈ້ງໃຫ້ພາກສ່ວນກ່ຽວຂ້ອງ"
- ກົມອຸດສາຫະກຳ
- ກົມການຄ້າພາຍໃນ
- ກົມກວດກາ